ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສໍາເລັດການຈັດສໍາມະນາຫົວຂໍ້: ການສ້າງຕັ້ງບໍລິສັດບໍລິຫານຊັບສິນ




ໃນລະຫວ່າງວັນທີ 13-14 ຕຸລາ 2021 ຜ່ານມານີ້, ຄະນະສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ (ສກໜ) ໄດ້ຈັດກອງປະຊຸມສໍາມະນາໃນຮູບແບບ (ອອນລາຍ) ໃນຫົວຂໍ້: ''ການສ້າງຕັ້ງບໍລິສັດບໍລິຫານຊັບສິນ" ໂດຍການເປັນປະທານຂອງທ່ານນາງ ທິບພະວັນ ຈັນທະຜາສຸກ ຫົວໜ້າ ສກໜ ແລະ ທ່ານ ດວານ ວັນ ຖັງ ຜູ້ອໍານວຍການໃຫຍ່ບໍລິສັດ ບໍລິຫານຊັບສິນ ຫວຽດນາມ, ໃຫ້ກຽດເຂົ້າຮ່ວມຮັບຟັງໂດຍທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຜູ້ຊີ້ນໍາ ສກໜ ແລະ ຜູ້ຊີ້ນໍາວຽກງານຄົ້ນຄວ້າສ້າງດໍາລັດວ່າດ້ວຍບໍລິສັດ ບໍລິຫານຊັບສິນລາວ, ຄະນະກົມ, ຄະນະພະແນກພາຍໃນ ທຫລ ເຂົ້າຮ່ວມຢ່າງພ້ອມ.

ການສຳມະນາໃນຄັ້ງນີ້, ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການບັນຍາຍ ພ້ອມທັງແລກປ່ຽນບົດຮຽນຈາກຊ່ຽວຊານ ຂອງບໍລິສັດ ບໍລິຫານຊັບສິນ ທີ່ຂຶ້ນກັບ ທຫວ ຕໍ່ຫຼາຍເນື້ອໃນເປັນຕົ້ນ: (1) ທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ, ລະບົບນິຕິກຳ ໃນການຈັດຕັ້ງ ແລະ ເຄື່ອນໄຫວຂອງ VAMC; (2) ລະບົບການກວດກາພາຍໃນ, ຂໍ້ຕົກລົງກ່ຽວກັບການກວດກາ, ການລາຍງານ, ການຕິດຕາມກວດກາ ຂອງອົງກອນທີ່ມີໜ້າທີ່ຄຸ້ມຄອງ ແລະ ພາກສ່ວນກ່ຽວຂ້ອງ; (3) ການຊື້-ຂາຍ ແລະ ບໍລິຫານໜີ້ເສຍ ທີ່ຊຳລະດ້ວຍພັນທະບັດພິເສດ ຂອງ VAMC; (4) ການປ້ອງກັນ ແລະ ບໍລິຫານໜີ້ເສຍ, ຊັບສິນດ້ອຍຄຸນນະພາບ, ການບໍລິຫານຄຸ້ມຄອງຊັບສິນ ທີ່ບໍ່ມີຄຸນນະພາບທີ່ VAMC ໄດ້ຊື້ມາສ້ອມແປງ, ຂາຍ ແລະ ອື່ນໆ. (5) ການຊື້-ຂາຍ ແລະ ບໍລິຫານຈັດການໜີ້ເສຍ, ການຂາຍຊັບສິນ ຫຼື ຫຼັກຊັບຄ້ຳປະກັນ ທີ່ຕິດພັນກັບໜີ້ເສຍ ຕາມລາຄາຕະຫຼາດ ຂອງ VAMC; (6) ການຄຸ້ມຄອງທຶນ, ການບັນທຶກ ແລະ ຜັງບັນຊີ ລະບົບລາຍງານທາງການເງິນ ແລະ ການວິເຄາະຄວາມສ່ຽງທາງດ້ານການເງິນ ຂອງ VAMC ເປັນຕົ້ນ.

ຜ່ານການຮັບຟັງສຳມະນາດັ່ງກ່າວ, ເຫັນໄດ້ວ່າເປັນຂີດໝາຍອັນສຳຄັນໃນການແລກປ່ຽນບົດຮຽນ ແລະ ເພີ່ມທະວີການຮ່ວມມື 2 ຝ່າຍ ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງລັດ ຫວຽດນາມ (ທຫວ) ໃຫ້ຮັດແໜ້ນຂຶ້ນກວ່າເກົ່າ, ຊຶ່ງບົດຮຽນທີ່ໄດ້ຈາກການສຳມະນາໃນຄັ້ງນີ້ ແມ່ນມີປະໂຫຍດຫຼາຍເພື່ອຈະມາໝູນໃຊ້ໃນການຄົ້ນຄວ້າຍົກລະດັບ ສກໜ ໃຫ້ເປັນນິຕິບຸກຄົນໃນຕໍ່ໜ້າ.

*ໂດຍ: ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້*

***ຢູ່ເມືອງລາວໃຊ້ເງິນກີບລາວ***